# ຢາຕ້ານໄວຣັດຊະນິດກິນແມ່ນຫຍັງ?

## ຢາເມັດເພື່ອຊ່ວຍໃຫ້ຜູ້ປ່ວຍໂຄວິດ-19 ດີຂຶ້ນ.

ຖ້າຫາກທ່ານມີໂອກາດທີ່ຈະຕິດໂຄວິດ-19ທີ່ຮ້າຍແຮງ ແລະ ມີຜົນກວດ ໂຄວິດ-19 ເປັນບວກພາຍໃນ 5 ມື້ ທີ່ຜ່ານມາ ທ່ານອາດຕ້ອງພິຈາລະນາໃຊ້ຢາຕ້ານໄວຣັດແບບກິນເອົາຕາມຄໍາແນະນໍາຂອງທ່ານໝໍ. ມີການ ຮັກສາປິ່ນປົວສອງແບບດັ່ງນີ້: Paxlovid™ (Pfizer) ແລະ legevirio (Merck). ທ່ານອາດມີເງື່ອນໄຂ ໄດ້ຮັບໜຶ່ງໃນການຮັກສາປິ່ນປົວພະຍາດໂຄວິດ-19ເຫຼົ່ານີ້ໂດຍຂຶ້ນກັບອາຍຸ, ປະຫວັດສຸຂະພາບຂອງທ່ານ ແລະ ໄລຍະເວລາທີ່ທ່ານມີອາການ

ການຮັກສາປິ່ນປົວດ້ວຍຢາຕ້ານໄວຣັດໃນຊ່ອງປາກອາດຈະຊ່ວຍໃຫ້ຮ່າງກາຍຂອງທ່ານຕ້ານກັບໂຄວິດ-19ໄດ້ໂດຍການຢຸດໄວຣັດ SARS-CoV-2 (ໄວຣັດທີ່ກໍ່ໃຫ້ເກີດໂຄວິດ-19) ຈາກການເພີ່ມຈານວນໃນຮ່າງກາຍ ຫຼຸດປະລິມານໄວຣັດພາຍໃນຮ່າງກາຍຫຼືຊ່ວຍລະບົບພູມຄຸ້ມກັນ. ເມື່ອເຂົ້າຮັບການຮັກສາປິ່ນປົວ ທ່ານອາດ ມີອາການຮຸນແຮງໜ້ອຍລົງ ແລະ ມີໂອກາດເຮັດໃຫ້ຄວາມເຈັບປວດຂອງທ່ານນັ້ນເບົາບາງໄດ້ ແລະ ຈໍາເປັນຕ້ອງໄດ້ຮັບການຮັກສາປິ່ນປົວໃນໂຮງໝໍ.

---

- ## ຂ້າພະເຈົ້າຈະໃຊ້ຢາຕ້ານໄວຣັດຊະນິດກິນໄດ້ແນວໃດ?

ການຮັບຢາຕ້ານໄວຣັດໃນຊ່ອງປາກໝາຍຄວາມວ່າທ່ານຕ້ອງກິນຢາເພື່ອຮັກສາປິ່ນປົວ. ທ່ານຄວນ ຮັບການຮັກສາປິ່ນປົວດ້ວຍຢາຕ້ານໄວຣັດໃນຊ່ອງປາກຕາມຄໍາແນະນໍາຂອງຜູ້ໃຫ້ບໍລິການດູແລດ້ານສຸຂະພາບຂອງທ່ານ. ຢ່າຂ້າມການກິນຢາຫຼືກິນຢາເພີ່ມເຕີມກໍລະນີທ່ານພາດຫຼືລືມກິນຢາຕ້ອງປະຕິບັດ ຕາມຄໍາແນະນໍາຂອງທ່ານໝໍ ທ່ານຄວນຕ້ອງປະຕິບັດຕາມຄໍາແນະນໍາຂອງທ່ານໝໍຈົນກ່ວາຜູ້ໃຫ້ບໍລິ ການດູແລດ້ານສຸຂະພາບຂອງທ່ານບອກໃຫ້ຢຸດ. ຢາຕ້ານໄວຣັດໃນຊ່ອງປາກອາດກິນໂດຍມີຫຼືບໍ່ມີອາ ຫານກໍໄດ້ ແລະ ແນະນໍາໃຫ້ກືນລົງໂດຍບໍ່ເຮັດໃຫ້ແຕກຫຼືບິດໃຫ້ແຕກ.

- ## ຈະເກີດຫຍັງຂຶ້ນຖ້າຫາກຂ້າພະເຈົ້າມີພາວະສຸຂະພາບແຊກຊ້ອນ ເຊັ່ນວ່າ: ບັນຫາໝາກໄຂ່ຫຼັງ ຫຼື ຕັບ?

ກ່ອນໃຊ້ຢາໃດໜຶ່ງນັ້ນທ່ານຄວນປຶກສາປະຫວັດສຸຂະພາບຂອງທ່ານກັບຜູ້ໃຫ້ບໍລິການດູແລດ້ານສຸຂະພາບຂອງທ່ານ. ນີ້ແມ່ນລວມເຖິງການບອກພວກເຂົາກ່ຽວກັບພາວະສຸຂະພາບໃດໆທີ່ທ່ານອາດມີຢູ່ ແລ້ວ ແລະ ຢາທີ່ຕ້ອງສັ່ງໂດຍແພດ, ຢາທີ່ຂາຍຕາມໜ້າຮ້ານ, ວິຕາມິນ ແລະ ອາຫານເສີມທີ່ທ່ານກໍາ ລັງໃຊ້.

ຜູ້ທີ່ມີບັນຫາກ່ຽວກັບໝາກໄຂ່ຫຼັງຫຼືຕັບຄວນປຶກສາແພດກ່ຽວກັບສະພາບຂອງຕົນກ່ອນທີ່ຈະກິນຢາຕ້ານໄວຣັດຊະນິດຮັບປະ ທານ. ຜູ້ໃຫ້ບໍລິການດູແລດ້ານສຸຂະພາບຂອງທ່ານສາມາດຕັດສິນໃຈໄດ້ວ່າ ການປິ່ນປົວດ້ວຍຢາຕ້ານໄວຣັດຊະນິດກິນນັ້ນເໝາະສົມກັບທ່ານຫຼືບໍ່ ແລະ ປະລິມານຢາທີ່ເໝາະກັບ ທ່ານ. ການຮັກສາປິ່ນປົວບາງຢ່າງອາດບໍ່ໄດ້ແນະນໍາໃຫ້ກັບຜູ້ທີ່ມີອາການບາງຢ່າງ.

## • ຈະເກີດຫຍັງຂຶ້ນຖ້າຫາກຂ້າພະເຈົ້າບໍ່ຜ່ານການຮອງຮັບການຮັກສາປິ່ນປົວດ້ວຍຢາຕ້ານໄວຣັດຊະນິດກິນ?

ຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານອາດຕັດສິນວ່າທ່ານບໍ່ມີສິດທີ່ຈະໄດ້ຮັບການຮັກສາປິ່ນປົວດ້ວຍຢາຕ້ານໄວຣັດຝນຊ່ອງປາກຫຼືບໍ່ເໝາະກັບທ່ານ. ອາດມີຫຼາຍເຫດຜົນຕໍ່ກັບກໍລະນີແບບນີ້. ທ່ານອາດມີ ເງື່ອນໄຂບໍ່ຖືກຕາມເກນທັງໝົດ, ຫຼື ທ່ານອາດມີພາວະສຸຂະພາບທີ່ບໍ່ເໝາະກັບການຮັກສາປິ່ນປົວບາງ ປະເພດ.
ເມື່ອເວົ້າເຖິງຕົວເລືອກການຮັກສາປິ່ນປົວທີ່ດີທີ່ສຸດສຳລັບທ່ານກັບຜູ້ໃຫ້ບໍລິການດູແລດ້ານ ສຸຂະພາບຂອງທ່ານ.

DOH 825-029 May 2022 Lao

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວ mailto:ecivil.rights@doh.wa.gov.